# ແບບສອບຖາມກ່ຽວກັບຄວາມຮູ້ດ້ານເພດ,ເຊື້ອ HIVແລະໂລກແອດ. ສໍາລັບພະນັກງານ
# ທີ່ຮັບຜິດຊອບວຽກງານຕົວຈິງ ກັບກຸ່ມຄົນ  ຊາຍຮັກຊາຍ

ຊື່ແລະນາມສະກຸນ: ____________________________________ວັນທີ່: ____________________

ບ່ອນປະຈໍາການ: ______________________________________________________________

ປະເທດ: _____________________________________________________________________

ທ່ານເປັນພະນັກງານ**ທີ່ເຮັດວຽກງານຕົວຈິງ ກັບກຸ່ມຄົນ ຊາຍຮັກຊາຍ ດົນປານໃດແລ້ວ?** __________________

ຈໍານວນເດືອນ / ປີ ທີ່ທ່ານມີປະສົບການທີ່ເຮັດວຽກ**ກັບກຸ່ມຄົນ ຊາຍຮັກຮ່ວມຊາຍ**: ຈໍານວນ_____ ເດືອນ______ປີ

**ກ: *ຄໍາຖາມກ່ຽວກັບ ເຊື້ອ HIV  ແລະ ໂລກແອດ***

**ກະລຸນາອ່ານຄໍາຖາມຂ້າງລຸ່ມນີ້ແລ້ວຕື່ມເຄື່ອງໝາຍ“X” ໃສ່ໃນຕາຕະລາງທີ່ທ່ານເຫັນວ່າຖືກກັບຄວາມຄິດເຫັນຂອງທ່ານ, ຫາກທ່ານຄິດວ່າຂໍ້ຄວາມນັ້ນ “ ຖືກຕ້ອງ”,  “ຜິດ”, “ບໍ່ຮູ້/ບໍ່ແນ່ໃຈ” ( ແຕ່ລະຄໍາຖາມໃຫ້ໝາຍເອົາພຽງຫ້ອງດຽວເທົ່ານັ້ນ )**

| ຄໍາຖາມ | ຖືກ | ຜິດ | ບໍ່ຮູ້/ບໍ່ແນ່ໃຈ |
|---|---|---|---|
| 1. ເຮົາສາມາດຕິດເຊື້ອໂລກເອດ**ໄດ້ຈາກການມີເພດສໍາພັນກັບຄົນທີ່ບໍ່ວ່າ ຕົນເອງມີເຊື້ອ *HIV* ຫຼື ຮູ້ວ່າມີຜົນເລືອດບວກ ໂດຍບໍ່ໃຊ້ຖົງຢາງອະນາໄມ.** | | | |
| 2. ເຮົາສາມາດຕິດເຊື້ອໂລກເອດໄດ້ ຖ້າເຮົານອນຫ້ອງດຽວກັບຄົນທີ່ຕິດເຊື້ອໂລກເອດ | | | |
| 3. ເຮົາສາມາດຕິດເຊື້ອໂລກເອດໄດ້ ຖ້າເຮົາໃຊ້ຫ້ອງນໍ້າດຽວກັບຄົນທີ່ຕິດເຊື້ອໂລກເອດ | | | |
| 4. ເຮົາສາມາດຕິດເຊື້ອໂລກເອດໄດ້ ຖ້າເຮົາທັກທາຍໂດຍການຈັບບາຍມື ຄົນທີ່ຕິດເຊື້ອໂລກເອດ | | | |
| 5. ຄົນທີ່ເຮົາເບິ່ງເຫັນວ່າເຂົາມີສຸຂະພາບແຂງແຮງດີ ກໍ່ອາດຈະເປັນຄົນທີ່ຕິດເຊື້ອໂລກເອດໄດ້ເຊັ່ນກັນ | | | |
| 6. ເຮົາສາມາດປ້ອງກັນຕົນເອງຈາກການຕິດເຊື້ອໂລກເອດໄດ້ໂດຍການໃຊ້ຖົງຢາງອະນາໄມຢ່າງຖືກຕ້ອງທຸກຄັ້ງເວລາມີເພດສໍາພັນ | | | |
| 7. ຄົນເຮົາສາມາດຕິດເຊື້ອໂລກເອດໄດ້ຈາກການຖືກຍຸງກັດ | | | |
| 8. ເຮົາສາມາດປ້ອງກັນຕົນເອງຈາກການຕິດເຊື້ອໂລກເອດໄດ້ໂດຍການ ມີຄູ່ນອນພຽງຄົນດຽວ ແລະ ຄູ່ນອນນັ້ນ ຕ້ອງບໍ່ແມ່ນ ຜູ້ຕິດເຊື້ອໂລກເອດ ແລະ ຕ້ອງບໍ່ມີເພດສໍາພັນກັບ ຄົນອື່ນອີກດ້ວຍ. | | | |

| | | | |
|---|---|---|---|
| 9. ເຮົາສາມາດປ້ອງກັນຕົນເອງຈາກການຕິດເຊື້ອໂລກເອດໄດ້ໂດຍບໍ່ມີເພດສຳພັນກັບໃຜເລີຍ. | | | |
| 10. ເຮົາສາມາດຕິດເຊື້ອໂລກເອດໄດ້ຈາກການໃຊ້ເຂັມສັກຢາທີ່ສະອາດ ແລະ ຜ່ານການຂ້າເຊື້ອແລ້ວ | | | |
| 11. ເຮົາສາມາດຕິດເຊື້ອໂລກເອດໄດ້ຈາກການໃຊ້ເຂັ້ມສັກຢາຮ່ວມກັບຜູ້ຕິດເຊື້ອໂລກເອດ. | | | |
| 12. ເຮົາສາມາດປ້ອງກັນການຕິດເຊື້ອໂລກເອດໄດ້ຈາກການເອົານ້ຳອະສຸຈິອອກຂ້າງນອກເວລາມີເພດສຳພັນ. | | | |
| 13. ເຮົາສາມາດຕິດເຊື້ອໂລກເອດຈາກການຕິດຕໍ່ກັນທາງນ້ຳລາຍ ແລະ ນ້ຳເຫື່ອໄດ້ | | | |
| 14. ໂດຍທົ່ວໄປແລ້ວຜິວໜັງຂອງຄົນຕິດເຊື້ອໂລກເອດຈະແຫ້ງ ແລະ ຕົນຕົວຈະຮ້ອນ | | | |
| 15. ຄົນທີ່ຕິດເຊື້ອໂລກເອດ ຈະຈ່ອຍ ແລະ ຜິວພັນຈະຊີດ,ຈືດ,ເຫຼືອງ | | | |
| 16. ປະຈຸບັນນີ້ ມີຢາສາມາດຮັກສາຄົນທີ່ຕິດເຊື້ອໂລກເອດໃຫ້ຫາຍຂາດໄດ້ | | | |
| 17. ເຮົາສາມາດຕິດເຊື້ອໂລກເອດ ຈາກການໃຊ້ແປງຖູແຂ້ວຮ່ວມກັບຄົນທີ່ຕິດເຊື້ອໂລກເອດ. | | | |
| 18. ຄົນເຮົາຈະຮູ້ວ່າຕົນເອງມີເລືອດບວກນັ້ນກໍ່ຕໍ່ເມື່ອມີການກວດຫາເຊື້ອ HIV antibody ຈາກສະຖານທີ່ກວດເລືອດທີ່ເຊື່ອຖືໄດ້ເທົ່ານັ້ນ | | | |
| 19. ການສັກລາຍ ກໍ່ສາມາດຕິດເຊື້ອໂລກເອດໄດ້ຖ້າເຄື່ອງມື ຫຼື ເຂັ້ມທີ່ໃຊ້ ບໍ່ໄດ້ຜ່ານການຂ້າເຊື້ອ | | | |
| 20. ເຮົາໃຊ້ຫຼອດສັກຢາຮ່ວມກັບຄົນອື່ນໄດ້ຢ່າງປອດໄພ ຖ້າເຮົາມີການປ່ຽນເຂັມໃໝ່ທຸກຄັ້ງ | | | |
| 21. ການມີເພດສຳພັນທາງປາກປອດໄພກ່ວາການມີເພດສຳພັນທາງຮູທະວານໜັກ | | | |
| 22. ເຮົາສາມາດມີເພດສຳພັນທາງຮູທະວານໜັກ ໄດ້ຢ່າງປອດໄພໂດຍບໍ່ໃຊ້ຖົງຢາງອະນາໄມ ຖ້າເຮົາຫາກບໍ່ເອົານ້ຳອະສຸຈິເຂົ້າໃນຮ່າງກາຍຂອງຄູ່ນອນ | | | |
| 23. ຄົນທີ່ຕຸ້ຍພີ ມີສຸຂະພາບສົມບູນ ມີໂອກາດຕິດເຊື້ອໂລກເອດໜ້ອຍກ່ວາ ຜູ້ທີ່ຈ່ອຍຜອມ. | | | |
| 24. ຄົນທີ່ຮັ່ງມີ ແມ່ນມີໂອກາດຕິດເຊື້ອໂລກເອດໜ້ອຍກວ່າຄົນທີ່ທຸກຍາກ | | | |
| 25. ການໃຊ້ນ້ຳລາຍແທນສານຫລໍ່ລື່ນ ກໍ່ດີກ່ວາບໍ່ໃຊ້ຫຍັງເລີຍ | | | |
| 26. –ເສັ້ນທາງຫຼັກຂອງການຕິດເຊື້ອຈາກການມີເພດສຳພັນ ຄືຕິດຕໍ່ໂດຍທາງປາກ ແລະ ທາງອະໄວຍະວະເພດ ບໍ່ແມ່ນທາງຮູທະວານໜັກ | | | |
| 27. ການກິນນ້ຳອະສຸຈິ ມີອັນຕະລາຍໜ້ອຍກ່ວາການໃຫ້ຄູ່ຮ່ວມນອນປ່ອຍນ້ຳອະສຸຈິເຂົ້າທາງຮູທະຫວາໜັກຂອງເຮົາ | | | |
| 28. ຖ້າເຮົາເປັນແຟນກັນກັບໃຜຜູ້ໜຶ່ງ ນານກວ່າ 6 ເດືອນ ຕໍ່ໄປເຮົາບໍ່ຈຳເປັນຕ້ອງໃຊ້ຖົງຢາງອະນາໄມກັບຄົນນັ້ນອີກ. | | | |
| 29. ມັນມີຄຸນປະໂຫຍດຫຼາຍ ທີ່ຈະໄປຮັບບໍລິການ ໃນການກວດ ແລະ ຮັບຄຳປຶກສາກ່ຽວກັບບັນຫາໂລກເອດ ເຖິງແມ່ນວ່າເຮົາຈະຕ້ອງໃຊ້ຄວາມກ້າຫານຢ່າງສູງກໍ່ຕາມ. | | | |

| | | | |
|---|---|---|---|
| 30. ການເປັນພະຍາດຕິດຕໍ່ທາງເພດສຳພັນ ໂດຍບໍ່ໄດ້ຮັບການຮັກສາ ກໍ່ຈະເຮັດໃຫ້ມີຄວາມສ່ຽງຕໍ່ການຕິດເຊື້ອໂລກເອດຫຼາຍຂື້ນ | | | |
| 31. ເຮົາສາມາດຕິດພະຍາດຕິດຕໍ່ທາງເພດສຳພັນໄດ້ໂດຍທີ່ເຮົາບໍ່ຮູ້ຕົວ | | | |
| 32. ເຮົາບໍ່ຈຳເປັນຕ້ອງໃຊ້ຖົງຢາງອະນາໄມໃນເວລາມີເພດສຳພັນກັບຄົນທີ່ໜຸ່ມ ແລະເບິ່ງຄືເປັນຄົນທີ່ສະອາດ | | | |
| 33. ເຮົາມີເພດສຳພັນທາງຮູທະວານໜັກກັບຄົນສິບຄົນໂດຍໃຊ້ຖົງຢາງອະນາໄມທຸກໆຄັ້ງຈະປອດໄພກວ່າການມີເພດສຳພັນທາງຮູທະວານໜັກກັບຄົນດຽວໂດຍບໍ່ໃຊ້ຖົງຢາງອະນາໄມເລີຍ. | | | |
| 34. ດິບປີງ (‘Dipping’ )<br>ການແຍ່ອະໄວຍະວະເພດເຂົ້າໃນຮູທະຫວາໜັກໂດຍບໍ່ປ່ອຍນ້ຳອະສຸຈິເຂົ້າໄປນັ້ນບໍ່ສາມາດຕິດເຊື້ອໂລກເອດໄດ້. | | | |
| 35. ຜູ້ທີ່ຕິດເຊື້ອໂລກເອດສອງຄົນ –ເມື່ອມີເພດສຳພັນກັນໂດຍບໍ່ໃຊ້ຖົງຢາງອະນາໄມແມ່ນບໍ່ປອດໄພສຳລັບເຂົາເຈົ້າ | | | |
| 36. ໂລກເອດເປັນພະຍາດທີ່ຕິດຕໍ່ໄດ້ນຳແຕ່ຄົນຕ່າງປະເທດເທົ່ານັ້ນ | | | |
| 37. ຖົງຢາງອະນາໄມ ມັນມີພຽງແຕ່ຂະໜາດດຽວ | | | |
| 38. ຖົງຢາງອະນາໄມທຸກ ໆ ຍີ່ຫໍ້ມີຄຸນນະພາບເໝືອນກັນ | | | |
| 39. ສາມາດໃຊ້ສານຫຼໍ່ລື່ນຊະນິດນ້ຳມັນກັບຖົງຢາງອະນາໄມໄດ້ຢ່າງປອດໄພ. | | | |
| 40. ການໃຊ້ຖົງຢາງອະນາໄມຊະນິດທີ່ມີສານຂ້ານ້ຳອະສຸຈິໄດ້ນັ້ນ ສາມາດປ້ອງກັນຈາກການຕິດເຊື້ອໂລກເອດໄດ້. | | | |
| 41. ການ ຕັດໜັງຫໍ່ຫຸ້ມປາຍອະໄວຍະວະເພດຊາຍສາມາດປ້ອງກັນຈາກການຕິດເຊື້ອໂລກເອດໄດ້. | | | |
| 42. ເຮົາບໍ່ຕ້ອງໃຊ້ຖົງຢາງອະນາໄມເວລາມີເພດສຳພັນກັບຄູ່ນອນທີ່ເຂົາໄດ້ຕັດໜັງຫໍ່ຫຸ້ມປາຍອະໄວຍະວະເພດກໍໄດ້. | | | |
| 43. ການເລຍຮູທະວານໜັກໃຫ້ກັນມີໂອກາດພຽງເລັກໜ້ອຍເທົ່ານັ້ນ ທີ່ຈະຕິດເຊື້ອໂລກເອດ ແຕ່ອາດຈະໄດ້ຮັບການຕິດເຊື້ອ ໄວຣັດຕັບອັກເສບ ຫຼື ຕິດພະຍາດຕິດຕໍ່ທາງເພດສຳພັນອື່ນ ໆ ໄດ້ງ່າຍ | | | |

## ຂ. ຄຳຖາມກ່ຽວກັບການມີເພດສຳພັນກັບເພດດຽວກັນ

| ຄຳຖາມ | ຖືກ | ຜິດ | ບໍ່ຮູ້/ບໍ່ແນ່ໃຈ |
|---|---|---|---|
| 44. ຊາຍຮັກຊາຍເກີດຈາກແຕ່ຍັງໄວເດັກ, ເດັກຊາຍຢູ່ຮ່ວມກັບເດັກຍິງຫຼາຍເກີນໄປ. | | | |
| 45. ຊາຍຮັກຊາຍເກີດຈາກການຂາດຮໍໂມນເພດຊາຍ | | | |
| 46. ການມີເພດສຳພັນກັບເພດດຽວກັນ ຖືເປັນສ່ວນໜຶ່ງຂອງແຟຊັນ | | | |

| | | | |
|---|---|---|---|
| 47. ການມີເພດສຳພັນກັບເພດດຽວກັນ ປະກົດມີຢູ່ໃນທຸກວັດທະນະທຳ ແລະ ທຸກ ໆ ປະເທດໃນໂລກ. | | | |
| 48. ການມີເພດສຳພັນໂດຍບໍ່ໃຊ້ຖົງຢາງອະນາໄມ, ຄົນຮັກເພດດຽວກັນ ຈະມີໂອກາດຕິດເຊື້ອໂລກເອດໄດ້ຫຼາຍກ່ວາ ກັບຄົນຮັກຕ່າງປະເພດ. | | | |
| 49. ການອົບຮົມ ແລະ ຝຶກສະມາທິ ສາມາດກຳຈັດ ຄວາມຮູ້ສຶກຮັກເພດດຽວກັນໄດ້ | | | |
| 50. ການມີເພດສຳພັນກັບເພດດຽວກັນ ຖືເປັນເລື່ອງທຳມະຊາດ | | | |
| 51. ພຶດຕິກຳໃນການມີເພດສຳພັນກັບເພດດຽວກັນແມ່ນເປ ັນບາບກຳ | | | |
| 52. ຊາຍແທ້ ຈະກາຍເປັນຊາຍຮັກຊາຍໄດ້ ຖ້າເຮົາຫາກພົບປະສ້າງສັນກັບເພດດຽວກັນຫຼາຍເກີນໄປ | | | |
| 53. ການມີເພດສຳພັນທາງຮູທະວານໜັກກັບຜູ້ຍິງ ສາມາດເຮັດໃຫ້ຄົນຜູ້ນັ້ນຮັກເພດດຽວກັນໄດ້ | | | |
| 54. ໃນກຸ່ມຄົນທີ່ມີຖານະປານກາງ ຈະມີຄົນທີ່ຮັກເພດດຽວກັນຫຼາຍກ່ວາກຸ່ມຄົນທີ່ມີຖານະຍາກຈົນ. | | | |
| 55. ບຸກຄົນທີ່ແຍ່ອະໄວຍະວະເພດຂອງຕົນເຂົ້າໃນຮູທະວານໜັກ ແມ່ນມີຄວາມສ່ຽງຕໍ່ການຕິດເຊື້ອໂລກເອດໜ້ອຍກ່ວາຜູ້ທີ່ຖືກແຍ່ໃສ່. | | | |
| 56. ຊາຍຮັກຊາຍ ກໍສາມາດໃຊ້ຖົງຢາງອະນາໄມຂອງຜູ້ຍິງ ໃນເວລາມີເພດສຳພັນທາງຮູທະວານໜັກໄດ້. | | | |
| 57. ຄົນຮັກເພດດຽວກັນ ເປັນຄົນທີ່ເຮັດໃຫ້ເກີດ ການແຜ່ລະບາດຂອງເຊື້ອໂລກເອດ. | | | |
| 58. ການມີເພດສຳພັນກັບເພດດຽວກັນ ມີສະເພາະຢູ່ແຕ່ໃນຕົວເມືອງເທົ່ານັ້ນ ຈະບໍ່ມີຢູ່ຕາມຊົນນະບົດ. | | | |

**ຄ. ການຢູ່ຮ່ວມກັນກັບຜູ້ຕິດເຊື້ອໂລກເອດ**

| ຄຳຖາມ | ຖືກ | ຜິດ | ບໍ່ຮູ້/ບໍ່ແນ່ໃຈ |
|---|---|---|---|
| 59. ຄວນແນະນຳໃຫ້ຜູ້ຕິດເຊື້ອໂລກເອດ ຢຸດຕໍ່ການມີເພດສຳພັນ ຈະເປັນການດີ. | | | |
| 60. ຜູ້ຕິດເຊື້ອໂລກເອດ ແລະ ຜູ້ປ່ວຍເປັນເອດ ຈະຕ້ອງໃຊ້ຖົງຢາງອະນາໄມສອງຊັ້ນແທນທີ່ຈະເປັນຊັ້ນດຽວເພື່ອຄວາມແນ່ໃຈໃນເວລາມ ີເພດ ສຳພ ັນ | | | |
| 61. ຖ້າຜູ້ຕິດເຊື້ອໂລກເອດກິນຢາຕ້ານໄວຣັດຢ່າງຖືກຕ້ອງ ເຂົາເຈົ້າກໍ່ສາມາດມີຊີວິດຢູ່ໄດ້ຢ່າງຍືນຍາວ ແລະ ມີສຸຂະພາບດີ. | | | |
| 62. ຜູ້ທີ່ຕິດເຊື້ອໂລກເອດ ບາງຄົນຕິດເຊື້ອມາໄດ້ 20 ກວ່າປີແລ້ວ | | | |
| 63. ເວລາທີ່ຕ້ອງການຫາຄູ່ນອນຊົ່ວຄາວ, ສິ່ງທີ່ດີທີ່ສຸດໃຫ້ຄິດວ່າ ທຸກຄົນເປັນຜູ້ຕິດເຊື້ອໂລກເອດ. | | | |
| 64. ການທີ່ເຮົາຕິດເຊື້ອໂລກເອດ ເປັນຄວາມຜິດພາດຂອງຕົວເຮົາເອງ | | | |

| | | | |
|---|---|---|---|
| 65. ໂດຍທົ່ວໄປຄົນທີ່ຕິດເຊື້ອໂລກເອດ ເປັນຜູ້ທີ່ມີເພດສຳພັນ ຫຼື ບໍ່ກໍ່ເປັນຄົນທີ່ໃຊ້ຢາເສບຕິດຫຼາຍກວ່າຄົນທີ່ບໍ່ຕິດເຊື້ອໂລກເອດ | | | |
| 66. ບາງເມືອງ ເຊັ່ນ : ກຸງເທບ ປະເທດໄທ ມີຫຼາຍກວ່າ ໜຶ່ງ ໃນ ສີ່ ຂອງຜູ້ຊາຍ ທີ່ເປັນນັກທ່ຽວໃນສະຖານທີ່ບັນເທີງ ໄດ້ຕິດເຊື້ອໂລກເອດ ແລະ ເປັນເອດ | | | |
| 67. ຜູ້ທີ່ຕິດເຊື້ອ ໂລກເອດ ຫຼື ຜູ້ເປັນເອດ ຄວນໄດ້ຮັບການກວດ CD-4 ເປັນປະຈຳ. | | | |
| 68. ສຳລັບຜູ້ຕິດເຊື້ອໂລກ ເອດ ແລະ ຜູ້ເປັນ ເອດ ການຝຶກຈິດໃຈໃຫ້ສະງົບ, ອອກກຳລັງກາຍຢ່າງສະໝ່ຳສະເໝີ ແລະ ກິນອາຫານທີ່ມີໂພສະນາການ ຈະຊ່ອຍໃຫ້ມີສຸຂະພາບແຂງແຮງມີຊີວິດໄດ້ດົນນານ | | | |
| 69. ຜູ້ທີ່ຫາກໍ່ຕິດເຊື້ອໂລກເອດໃໝ່ ສາມາດແຜ່ເຊື້ອໄປສູ່ຜູ້ອື່ນໂດຍການມີເພດສຳພັນທີ່ບໍ່ໄດ້ປ້ອງກັນ ໄດ້ງ່າຍກ່ວາຜູ້ທີ່ຕິດເຊື້ອ ໂລກ ເອດ ມາເປັນເວລາໜຶ່ງປີແລ້ວ | | | |
| 70. ຄົນທີ່ກຳລັງກິນຢາຕ້ານໄວຣັດ ທີ່ມີປະລິມານໄວຣັດໃນລະດັບ ທີ່ບໍ່ສາມາດກວດພົບ ສາມາດແຜ່ເຊື້ອໂລກເອດໄປສູ່ຄົນອື່ນໄດ້ ໂດຍຜ່ານການມີເພດສຳພັນທາງຮູທະວານໜັກ ທີ່ບໍ່ມີການປ້ອງກັນໄດ້ເຊັ່ນດຽວກັນກັບຜູ້ທີ່ຕິດເຊື້ອໂລກເອດທີ່ບໍ່ໄດ້ຮັບຢາຕ້ານໄວຣັດ | | | |

**໗.ຄຳຖາມສະແດງຄວາມຄິດຄວາມເຫັນ ( ການຕອບຄຳຖາມໃນຫົວຂໍ້ນີ້ ບໍ່ມີຜິດ ຫຼືຖືກ)**

ສົມມຸດວ່າ: ທ່ານພົບຜູ້ຊາຍໄວກາງຄົນຜູ້ໜຶ່ງ ລາວບອກທ່ານວ່າ ລາວບໍ່ໃຊ້ຖົງຢາງອະນາໄມເພາະວ່າ ທຳໃຫ້ຄວາມສຸກທາງເພດຫຼຸດລົງ ແລະລາວຍັງບອກອີກວ່າ ລາວເປັນຜູ້ທີ່ສອດອະໄວຍະເພດໃສ່ທາງຮູທະວານໜັກໃສ່ຄົນອື່ນເທົ່ານັ້ນ. ແລ້ວລາວຍັງບອກອີກວ່າ ລາວບໍ່ໄດ້ສບົງຕໍ່ກັບການຕິດເຊື້ອ ໂລກເອດ ທ່ານຄວນຈະບອກຫຼື ແນະນຳ ຜູ້ຊາຍຄົນນັ້ນແນວໃດ.

ສົມມຸດວ່າ: ທ່ານພົບຜູ້ຊາຍສອງຄົນເປັນແຟນກັນໄດ້ 6 ເດືອນແລ້ວ, ພວກເຂົາທັງສອງບອກທ່ານວ່າ ພວກເຂົາທັງສອງບໍ່ເຄີຍມີເພດສຳພັນກັບຄົນອື່ນອີກ, ພວກເຂົາຖາມທ່ານວ່າ ພວກເຂົາຄວນຈະຢຸດໃຊ້ຖົງຢາງອະນາໄມດີບໍ່? ທ່ານຈະຊ່ວຍໃຫ້ຄຳແນະນຳພວກເຂົາແບບໃດ?

ໃນລະຫວ່າງການເຮັດວຽກຂອງທ່ານ

ສົມມຸດວ່າ: ທ່ານພົບຜູ້ຊາຍໜຸ່ມຄົນໜຶ່ງທີ່ເຂົາເຄີຍມີເພດສຳພັນກັບຜູ້ຊາຍດ້ວຍກັນມາດົນນານແລ້ວ, ແຕ່ຕອນນີ້ພໍ່ແມ່ຂອງລາວໃຫ້ລາວແຕ່ງງານກັບຜູ້ຍິງຄົນໜຶ່ງ ລາວບໍ່ແນ່ໃຈວ່າລາວຈະເຮັດແນວໃດ, ທ່ານຈະໃຫ້ຄຳແນະ ນຳ ຫຼືບອກລາວແນວໃດດີ?

ໃຫ້ທ່ານຊ່ວຍບອກປະສົມການຈາກການເຮັດວຽກຂອງທ່ານທີ່ຜ່ານມາວ່າມີ ເຫດການໃດແດ່ທີ່ເຮັດໃຫ້ທ່ານຮູ້ສຶກວ່າຍາກ ຫຼື ທ້າທາຍສຳລັບທ່ານ ແມ່ນບັນຫາຫຍັງທີ່ທ່ານຄິດວ່າຍາກ, ແລະທ່ານແກ້ໄຂບັນຫາໄດ້ແບບໃດ?

ທ່ານຕ້ອງການຊ່ວຍເຫຼືອ ຫຼື ການສະໜັບສະໜູນແບບໃດເພື່ອຊ່ວຍໃຫ້ ທ່ານເຮັດວຽກໄດ້ງ່າຍຂຶ້ນ ?